**ມິຊຊາສົມໂພດພຣະຈິດເຈົ້າສະເດັດລົງມາ**

**ວັນອາທິດ ທີ 23 ພຶດສະພາ 2021**




**ພຣະວໍລະສານໂດຍນັກບຸນຢວງ 20, 19-23**

ແລງວັນນັ້ນເອງທີ່ເປັນວັນຕົ້ນສັບປະດາ, ປະຕູຫ້ອງບ່ອນພວກສາວົກປະຊຸມກັນນັ້ນປິດໝົດທຸກປ່ອງ, ຍ້ອນຢ້ານພວກຢິວ. ພຣະເຢຊູເຈົ້າສະເດັດມາຢືນຢູ່ກາງພວກເຂົາແລ້ວກ່າວແກ່ພວກເຂົາວ່າ: “ສັນຕິສຸກຈົ່ງມີແກ່ພວກເຈົ້າ”. ເມື່ອໄດ້ກ່າວດັ່ງນັ້ນແລ້ວ, ພຣະອົງໄດ້ຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກເຂົາເຫັນ. ພວກສາວົກຈຶ່ງຮູ້ສຶກຍິນດີດ້ວຍໄດ້ເຫັນພຣະອົງເຈົ້າ.

ພຣະອົງຍັງກ່າວແກ່ພວກເຂົາອີກວ່າ: “ສັນຕິສຸກຈົ່ງມີແກ່ພວກເຈົ້າ, ພຣະບິດາໄດ້ຊົງໃຊ້ເຮົາມາແນວໃດ ເຮົາກໍໃຊ້ພວກເຈົ້າໄປແນວນັ້ນດ້ວຍ.” ເມື່ອແລ້ວ, ພຣະອົງກໍໄດ້ຊົງເປົ່າໃສ່ພວກເຂົາແລ້ວກ່າວວ່າ: “ຈົ່ງຮັບພຣະຈິດເຈົ້າ! ພວກເຈົ້າຈະໂຜດຍົກບາບໃຫ້ຜູ້ໃດ, ບາບຂອງຜູ້ນັ້ນກໍຈະຫລຸດພົ້ນໄປ; ພວກເຈົ້າຈະໜ່ວງຈ່ອງບາບຂອງຜູ້ໃດໄວ້, ບາບຂອງຜູ້ນັ້ນກໍຈະຄ້າງຄາຢູ່”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຫລັງຈາກພຣະເຢຊູເຈົ້າກັບຄືນຊີບຈາກພວກຜູ້ຕາຍເປັນເວລາຫ້າສິບວັນ. ວັນນີ້, ພຣະກຣິສຕະຈັກກໍສົມໂພດພຣະຈິດເຈົ້າສະເດັດລົງມາ. ແລະກໍເປັນວັນທີ່ສະຫລຸບກຳນົດປາສກາດ້ວຍ. ບໍ່ວ່າຈະເປັນການກັບເປັນຄືນມາຂອງພຣະເຢຊູເຈົ້າ, ການສະເດັດຂຶ້ນສະຫວັນຂອງພຣະອົງ. ແລະວັນນີ້ແມ່ນວັນທີ່ພຣະຈິດຂອງພຣະອົງລົງມາເພື່ອຢູ່ນຳພວກສາວົກ. ແຕ່ລະເຫດການສຳຄັນທີ່ກ່າວມານີ້ກໍລ້ວນແຕ່ບົ່ງບອກເຖິງຄວາມຮັກທີ່ພຣະເຢຊູເຈົ້າຊົງມີຕໍ່ມະນຸດທຸກຄົນ. ແຕ່ທຸກຄົນຈະຮູ້ຈັກຄວາມຮັກນີ້ໄດ້ກໍດ້ວຍອາໄສການປະກາດແລະການເປັນພິຍານຂອງພວກສາວົກຜູ້ຊຶ່ງພຣະອົງຊົງເລືອກສັນ. ດ້ວຍເຫດນີ້, ວັນນີ້ພຣະຈິດເຈົ້າຈຶ່ງໄດ້ສະເດັດລົງມາເໜືອພວກສາວົກບໍ່ພຽງແຕ່ຢູ່ນຳພວກເຂົາເທົ່ານັ້ນ, ແຕ່ຍັງຮ່ວມພາລະກິດການປະກາດເປັນພິຍານເຖິງພຣະເຢຊູເຈົ້າໃນຊີວິດພວກເຂົາອີກດ້ວຍ. ອົງພຣະຈິດເຈົ້ານີ້ຈະເປັນເຫື່ອແຮງ, ຄວາມສະຫລາດ, ສະຕິປັນຍາແລະຄວາມຮັກຮ້ອນຮົນໃຫ້ພວກສາວົກເພື່ອພວກເຂົາຈະໄດ້ເປັນພິຍານທີ່ສັດຊື່ຂອງພຣະເຢຊູເຈົ້າຢູ່ໃນໂລກນີ້.

ແລະພາລະກິດທີ່ສຳຄັນຊຶ່ງພຣເຢຊູເຈົ້າມອບໝາຍໃຫ້ພວກລູກສິດເມື່ອພຣະອົງກັບເປັນຄືນມາກໍຄືພາລະກິດແຫ່ງການປົດປ່ອຍມະນຸດອອກຈາກການຜູກມັດຂອງບາບ. ດັ່ງທີ່ພຣະເຢຊູເຈົ້າກ່າວກັບພວກສາວົກໃນພຣະວໍລະສານວັນນີ້ວ່າ: “ພວກເຈົ້າຈະໂຜດຍົດບາບໃຫ້ຜູ້ໃດ, ບາບຂອງຜູ້ນັ້ນກໍຈະຫລຸດພົ້ນ. ພວກເຈົ້າຈະໜ່ວງຈ່ອງບາບຂອງຜູ້ໃດໄວ້, ບາບຂອງຜູ້ນັ້ນກໍຈະຄ້າງຄາຢູ່”. ສິ່ງທີ່ພວກສາວົກກະທຳນີ້ ກໍເປັນສິ່ງທີ່ພຣະເຢຊູເຈົ້າໄດ້ກະທຳກ່ອນແລ້ວ ຜ່ານການຕາຍຂອງພຣະອົງບົນໄມ້ກາງເຂນເພື່ອປົດປ່ອຍພວກເຮົາອອກຈາກບາບອັນນຳໄປສູ່ຄວາມຕາຍ. ຫລືເວົ້າອີກຢ່າງ, ພາລະກິດທີ່ພວກສາວົກກະທຳນີ້ແມ່ນການຊ່ວຍຄົນອື່ນໃຫ້ຮອດຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນນັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ ລູກຂໍຂອບພຣະຄຸນພຣະອົງສຳລັບພຣະຈິດເຈົ້າຊຶ່ງພຣະອົງປະທານໃຫ້ພວກສາວົກກໍຄືໃຫ້ລູກວັນນີ້. ຂໍໃຫ້ອົງພຣະຈິດເຈົ້ານີ້ຊ່ວຍລູກໃຫ້ພົບກັບຄວາມຈິງແລະຄວາມຮັກຂອງພຣະອົງຜ່ານທາງວາຈາຂອງພຣະອົງ ແລະເປັນຕົ້ນຜ່ານທາງສິນແຫ່ງການອະໄພບາບດ້ວຍເທີ້ນ. ເພາະອາໄສສິນອະໄພບາບນີ້ ລູກຈະໄດ້ຄືນດີກັບພຣະອົງແລະມີຊີວິດໃໝ່ໃນພຣະອົງດ້ວຍ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ